ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*********************

ສະຖານເອກອັກຄະລັດຖະທູດແຫ່ງ
ສປປ ລາວ ທີ່ ວໍຊິງຕັນ, ດີຊີ

ເລກທີ 4 /ສລວ.ກສ.10

## ແຈ້ງການ

ກ່ຽວກັບການຍົກເວັ້ນ ຄ່າທຳນຽມວີຊາ ໃຫ້ຄົນເຊື້ອຊາດລາວ.

ສະຖານເອກອັກຄະລັດຖະທູດແຫ່ງ ສປປລາວ ປະຈຳ ສະຫະລັດອະເມລິກາ, ການາດາ ແລະ ແມັກຊິກໂກ ຂໍຖືເປັນກຽດແຈ້ງມາຍັງພີ່ນ້ອງເຊື້ອຊາດລາວຊາບທົ່ວເຖິງກັນວ່າ: ເລີ່ມແຕ່ວັນທີ 1 ມັງກອນ 2011 ເປັນຕົ້ນໄປ, ທາງການລາວ ໄດ້ຕົກລົງໃຫ້ທາງສະຖານເອກອັກຄະລັດຖະທູດ ສປປ ລາວ ທີ່ວໍຊິງຕັນ, ດີຊີ ສືບຕໍ່ອອກວີຊາຢ້ຽມຢາມໄລຍະສັ້ນໃຫ້ແກ່ພວກພີ່ນ້ອງຄົນເຊື້ອຊາດລາວ ໂດຍຈະຍົກເວັ້ນຄ່າທຳນຽມວີຊາໃຫ້ແກ່ບຸກຄົນເຊື້ອຊາດລາວຕາມເງື່ອນໄຂດັ່ງລຸ່ມນີ້:

1. ຍົກເວັ້ນຄ່າທຳນຽມວີຊາໃຫ້ແກ່ບຸກຄົນເຊື້ອຊາດລາວຢູ່ຕ່າງປະເທດ ຜູ້ທີ່ມີອາຍຸແຕ່ 65 ປີຂຶ້ນໄປ, ເດັກຕ່ຳກວ່າ 15 ປີ, ນັກບວດ, ຜູ້ຄົນເສຍຈິດ ຫຼື ເສຍອົງຄະທີ່ໄດ້ໄປສະເໜີຂໍວີຊາຢ້ຽມຢາມໄລຍະສັ້ນ(NI-B3) ຢູ່ສະຖານທູດ, ສະຖານກົງສຸນໃຫຍ່ແຫ່ງ ສປປ ລາວ ທີ່ຕ່າງປະເທດ ແລະ ຢູ່ດ່ານສາກົນ ໃນຂອບເຂດທົ່ວປະເທດ ຈະໄດ້ຮັບອະນຸຍາດໃຫ້ພັກເຊົາຢູ່ ສປປ ລາວ ພາຍໃນກຳນົດ 90 ວັນ. ຫຼັງຈາກນັ້ນ, ຖ້າຜູ້ກ່ຽວຫາກມີຄວາມປະສົງຈະຢູ່ຕໍ່, ທາງການລາວກໍຈະອຳນວຍຄວາມສະດວກໃນການຕໍ່ວີຊາໃຫ້ໂດຍຈະຍົກເວັ້ນການເກັບຄ່າທຳນຽມເຊັ່ນດຽວກັນ.

2. ຍົກເວັ້ນຄ່າທຳນຽມວີຊາໃຫ້ແກ່ບຸກຄົນເຊື້ອຊາດລາວຢູ່ຕ່າງປະເທດ (ທີ່ບໍ່ໄດ້ກຳນົດໄວ້ໃນຂໍ້ທີ 1 ຂ້າງເທິງ) ທີ່ໄດ້ໄປສະເໜີຂໍວີຊາຢ້ຽມຢາມໄລຍະສັ້ນ(NI-B3)ຢູ່ສະຖານທູດ, ສະຖານກົງສຸນໃຫຍ່ແຫ່ງ ສປປ ລາວ ທີ່ຕ່າງປະເທດເພື່ອໄປຢ້ຽມຢາມຍາດພີ່ນ້ອງຢູ່ ສປປ ລາວ ພາຍໃນກຳນົດ 60 ວັນ. ຫຼັງຈາກນັ້ນ, ຖ້າຜູ້ກ່ຽວຫາກມີຄວາມປະສົງຈະຢູ່ຕໍ່ທາງການລາວກໍຈະອຳນວຍຄວາມສະດວກໃນການຕໍ່ວີຊາໃຫ້ໂດຍຈະຍົກເວັ້ນການເກັບຄ່າທຳນຽມເຊັ່ນດຽວກັນ.

3. ບຸກຄົນເຊື້ອຊາດລາວຢູ່ຕ່າງປະເທດ ( ນອກຈາກທີ່ໄດ້ລະບຸໄວ້ໃນຂໍ້ທີ 1 ) ທີ່ໄປຂໍວີຊາຢ້ຽມຢາມໄລຍະສັ້ນ (NI-B3) ຢູ່ຕາມດ່ານສາກົນເພື່ອເຂົ້າໄປຢ້ຽມຢາມພີ່ນ້ອງຢູ່ ສປປ ລາວ ຈະຕ້ອງໄດ້ຈ່າຍຄ່າທຳນຽມວີຊາຕາມລະບຽບ. ຫຼັງຈາກນັ້ນ, ຖ້າມີຄວາມປະສົງຈະຢູ່ຕໍ່, ທາງການລາວກໍຈະອຳນວຍຄວາມສະດວກໂດຍຈະເກັບຄ່າທຳນຽມວີຊາຕາມລະບຽບຄື 1 ໂດລາຕໍ່ມື້.

ດັ່ງນັ້ນ, ສະຖານເອກອັກຄະລັດຖະທູດ ຈຶ່ງແຈ້ງມາຍັງພີ່ນ້ອງເຊື້ອຊາດລາວ ທີ່ດຳລົງຊີວິດຢູ່ສະຫະລັດອາເມລິກາ ແລະ ການາດາເພື່ອຊາບຕາມທາງຄວນດ້ວຍ.

ວໍຊິງຕັນ, ວັນທີ 30 ທັນວາ 2010

ເອກອັກຄະລັດຖະທູດ

ແສງ ສຸຂະທິວົງ